British Embassy
Vientiane

**ວັນພຸດ, ວັນທີ 28 ມັງກອນ 2015**

**ສະຫະລາຊະອານາຈັກ (UK) ສະໜັບສະໜູນຄວາມພະຍາຍາມໃນການຕ້ານການຟອກເງິນ ໃນ ລາວ**

**ສະຖານທູດອັງກິດ ມອບອຸປະກອນໃຫ້ແກ່ ທະນາຄານແຫ່ງຊາດລາວ ເພື່ອປັບປຸງການຕ້ານການຟອກເງິນ ແລະ ການສະໜັບສະໜູນດ້ານການເງິນແກ່ກຸ່ມກໍ່ການຮ້າຍ.**

ໃນວັນທີ 28 ມັງກອນ, ທ່ານເອກອັກຄະລັດຖະທູດ ທ່ານ ຟີລິບ ມາໂລນ ໄດ້ມອບອຸບປະກອນເຄື່ອງໃຊ້ຫ້ອງການ ໃຫ້ແກ່ ທ່ານ ພັນທະບູນ ໄຊຍະເພັດ, ຫົວໜ້າໜ່ວຍງານຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ເປັນສັກຂີພະຍານ ໂດຍ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າ ທະນະຄານ ແຫ່ງ ສປປ ລາວ. ການມອບອຸບປະກອນດັ່ງກ່າວ ເປັນສ່ວນໜຶ່ງຂອງການຊ່ວຍເຫຼືອ ຈາກລັດຖະບານ ສະຫະລາຊະອານາຈັກອັງກິດ ທີ່ໄດ້ປະກອບສ່ວນໃຫ້ແກ່ ລັດຖະບານ ສປປ ລາວ ເພື່ອຮັບໃຊ້ໃນວຽກງານຕ້ານການຟອກເງິນ. ເຄື່ອງອຸປະກອນ ເຊິ່ງລວມມີ ຄອມພິວເຕີຕັ້ງໂຕະ 1 ຊຸດ, ຄອມພິວເຕີແລັບທອບ 1 ຊຸດ ພ້ອມທັງເຄື່ອງພິມ 1 ຊຸດ ແລະ ເຄື່ອງສາຍສະໄລ 1 ຊຸດ ເຊິ່ງຈະໄດ້ນຳໃຊ້ໃນໜ່ວຍງານຕ້ານການຟອກເງິນ (the Anti-Money Laundering Investigation Unit (AMLIU)) ເພື່ອເພີ່ມທະວີຄວາມອາດສາມາດຂອງໜ່ວຍງານໃຫ້ສູງຂຶ້ນ.

ນອກຈາກນັ້ນໃນຕົ້ນປີ 2014 ສະຖານທູດອັງກິດ ຍັງໄດ້ສະໜັບໜູນທຶນໃນການແປເອັກສານທີ່ປະກອບໃສ່ ຮ່າງກົດ ໝາຍວ່າດວ້ຍ: ການຕ້ານການຝອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳທີ່ຕິດພັນ ເຊັ່ນກົດກະບຽບການຄຸ້ມຄອງຕະຫຼາດ ໃນຂະແໜງການເງິນ ໃຫ້ແກ່ ທະນາຄານແຫ່ງສປປ ລາວ ເພື່ອຊ່ວຍໃຫ້ ສປປ ລາວ ປະຕິບັດໄດ້ຕາມຄຳ ແນະນຳຂອງ FATF ການຕ້ານການຝອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍກ່ຽວກັບການຕ້ານການຟອກເງິນ/ຕ້ານການໃຫ້ການສະໜັບສະໜູນດ້ານ ການເງິນແກ່ກຸ່ມກໍ່ການຮ້າຍ. ນອກຈາກນັ້ນສະໜັບຍັງຈະລວມ ການຝຶກອົບຮົມ ເຕັກນິກການສືບສວນສອບສວນດ້ານການຕ້ານການຝອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ ແລະ ການຝຶກອົບຮົມດ້ານການວິເຄາະການເງິນ ໃຫ້ພະນັກງານ ໜ່ວຍງານຕ້ານການຟອກເງິນແຫ່ງ ທະນາຄານ ແຫ່ງ ສປປ ລາວ.

ໂຄງການຊ່ວຍເຫລືອນີ້ ເປັນສ່ວນໜຶ່ງຂອງຈຸດປະສົງລວມຂອງລັດຖະບານສະຫະລາຊະອານາຈັກອັງກິດ ໃນການທີ່ຈະເຮັດວຽກຮ່ວມກັບຄູ່ຮ່ວມງານທີ່ກ່ຽວຂ້ອງ ໃນການສົ່ງເສີມສະພາບແວດລ້ອມໃຫ້ເອື້ອອຳນວຍໃນການເຮັດທຸລະກິດໃນ ສປປ ລາວ ບົນພື້ນຖານ ລະບົບເສດຖະກິດສາກົນທີ່ອີງໃສ່ ກົດເກນ ແລະ ລະບຽບການ ເປັນຫຼັກ.